# ການບໍຣິການດ້ານອາຫານ

ຜແນກອາຫານໄດ້ບໍຣິການອາຫານ ແລະ ອາຫານເບົາປະຈຳວັນແກ່ພວກນັກຮຽນ ແລະ ພວກພະນັກງານທົ່ວເຂດສູນກາງສຶກສາຫລາຍກວ່າ **110,000** ຄາບ. ການປ່ຽນແປງໂຄງການໃຫມ່ໃນໂຮງຮຽນປະຖົມ ແລະ ມັທຍົມ ແມ່ນເນັ້ນຫນັກໃສ່ການປ່ຽນແປງດ້ານການບໍຣິການອາຫານ. ເພື່ອໃຫ້ນັກຮຽນມີທາງເລືອກກິນອາຫານທີ່ບຳຣຸງສຸຂພາບຮ່າງກາຍດີຂຶ້ນ ນີ້ແມ່ນຈຸດໃຈກາງຂອງການປ່ຽນແປງ.

> ## ຂໍ້ສລູບ
>
> - **55.5% ຂອງນັກຮຽນສູນກາງສຶກສາແຊນດິເອໂກ ມີເງື່ອນໄຂກິນອາຫານຟຣີ ຫລື ຈ່າຍຫລຸດລາຄາ.**
> - **ແຕ່ລະວັນ, ຜແນກບໍຣິການອາຫານຂອງສູນກາງສຶກສາແຊນດິເອໂກ ໄດ້ກະກຽມ ແລະ ບໍຣິການອາຫານໂດຍສເລັ່ຍ:**
>   - **25,000 ອາຫານເຊົ້າ**
>   - **72,000 ອາຫານທ່ຽງ**
>   - **12,200 ອາຫານເບົາ**

ໂຄງການເລືອກກິນອາຫານໃຫມ່ທີ່ເອີ້ນວ່າ Kid’s Choice Cafe Program ໄດ້ສຳເຣັດລົງໃນໂຮງຮຽນປະຖົມ **139** ແຫ່ງໃນເດືອນພຶສພາ **2004.** ໂຄງການ Kid’s Choice Cafe Program ມີອາຫານໃຫ້ເລືອກກິນສີ່ຢ່າງ ຈຳພວກຫມາກໄມ້, ຈຳພວກຜັກ ແລະ ອາຫານທີ່ບຳຣຸງສຸຂພາບທຸກໆວັນ. ໂຄງການໃຫມ່ນີ້ຊຸກຍູ້ໃຫ້ພວກນັກຮຽນກິນອາຫານຢູ່ໂຮງຮຽນສມ່ຳສເມີ ແລະ ຊ່ອຍຊັກນຳເຂົາເຈົ້າໃຫ້ເລືອກກິນອາຫານເພື່ອບຳຣຸງສຸຂພາບ. ຄ່າອາຫານທ່ຽງໃນໂຮງຮຽນປະຖົມ $**1.25**

ໄດ້ຊຸກຍູ້ໃຫ້ພວກນັກຮຽນກິນອາຫານເຊົ້າທຸກໆວັນເພື່ອໃຫ້ເຂົາເຈົ້າເຂົ້າຫ້ອງຮຽນກຽມຮ່ຳຮຽນທຸກຢ່າງ. ອາຫານເຊົ້າຂອງໂຄງການ Kid’s Choice Cafe Program ມີໄວ້ບໍຣິການສາມຢ່າງ ຮວມມີທັງນົມສົ້ມ (yogurt) ແລະ ຊີຣີໂອ (cereals) ທີ່ບໍ່ຫວານຫລາຍຢ່າງ, ສະລັດຮວມມິດ ຮວມທັງຫມາກໄມ້ສົດ, ຫມາກໄມ້ຕາກແຫ້ງ. ນັບແຕ່ໂຄງການ Kid’s Choice Cafe Program ໄດ້ເລີ້ມມາພວກນັກຮຽນມັກກິນອາຫານເຊົ້າ ແລະ ອາຫານທ່ຽງໃນໂຮງຮຽນຫລາຍຂຶ້ນ. ອາຫານເຊົ້ານີ້ໄດ້ຈັດບໍຣິການຢູ່ໃນໂຮງຮຽນມັທຍົມຄືກັນ. ລາຄາອາຫານເຊົ້າໃນໂຮງຮຽນປະຖົມ ຫລື ໂຮງຮຽນມັທຍົມແມ່ນ $0.50.

ອາຫານທ່ຽງຂອງພວກນັກຮຽນໂຮງຮຽນພາກກາງ ແລະ ມັທຍົມນັ້ນມີໃຫ້ເລືອກຫລາຍໆຢ່າງ. ອາຫານທ່ຽງສຳຫລັບບຳຣຸງສຸຂພາບຄົບຊຸດ ລາຄາ $**1.75**. ຍັງມີບ່ອນຂາຍພິເສດອີກ ຊື່ອງມີແຮມເບີເກີ (hamburgers), ອາຫານແມກຊີກັນ ແລະ ປີຊາ (pizza), ສະລັດ, ແຊນວິສ (sandwiches) ແລະ ຕົ້ມແກງຕ່າງໆ. ມີໂຄງການອາຫານສົມບູນແບບສຳຫລັບໂຮງຮຽນປະຖົມ, ສຳຫລັບໂຮງຮຽນມັທຍົມ ປະຈຸບັນກຳລັງເນັ້ນຫນັກໃສ່ການປ່ຽນແປງ. ໂຮງຮຽນມັທຍົມ ສິບສອງແຫ່ງໄດ້ມີສະລັດຮວມມິດແລ້ວ ແລະ ລາຍການອາຫານໃຫມ່ນັ້ນ ໄປຕາມລາຍການອາຫານ Power Up Cafes.

ສູນກາງສຶກສາແຊນດິເອໂກ (SDCS) ໄດ້ໃຫ້ອາຫານຟຣີ ແລະ ຫລຸດລາຄາສຳຫລັບພວກນັກຮຽນທີ່ຄອບຄົວມີລາຍໄດ້ຖືກກັບເງື່ອນໄຂທີ່ອີງຕາມກົດລະບຽບ ແລະ ລະບຽບການຂອງກະຊວງກະສິກັມສະຫະຣັຖອະເມຣິກາ (USDA). ໃນສູນກາງສຶກສານີ້ມີນັກຮຽນຫລາຍກວ່າເຄິ່ງນຶ່ງມີເງື່ອນໄຂໄດ້ກິດອາຫານຟຣີ ຫລື ຫລຸດລາຄາ. ມີໃບສມັກສົ່ງໄປຫາພໍ່ແມ່ໃນທຸກໆຕົ້ນປີ ແລະ ຍັງມີປະໄວ້ໃຫ້ພໍ່ແມ່ຢູ່ໃນໂຮງຮຽນຕລອດປີ.

ຜແນກບໍຣິການອາຫານສູນກາງສຶກສາເຊື່ອວ່າສຸຂພາບຮ່າງກາຍດີ ເຮັດໃຫ້ມັນສມອງດີ. ລາຍການອາຫານທຸກອັນຂຽນຂຶ້ນໂດຍແພທຊຽວຊານດ້ານອາຫານທີ່ໃຊ້ຄອມພິວເຕີວິຈັຍອາຫານໃຫ້ມີຄວາມກ້ຳເກິ່ງ, ບຳຣຸງຮ່າງກາຍແກ່ພວກນັກຮຽນທຸກໆຄົນໃນທຸກໆວັນ.

*ອະພິບັນທະນາ ດ້ານການພິມແຈກຢາຍໂດຍ ມູນນິທິ Annie E. Casey Foundation*

ລາຍລະອຽດຕິດຕໍ່ຫາ: **Food Services: (858) 627-7340**
**Media inquires: (619) 725-5578**
**www.sandi.net**

ບໍຣິການຊ່ວຍເຫລືອນັກຮຽນເກືອບ **138,000** ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ສຸດແຫ່ງທີສອງຂອງຣັຖຄາລີຟໍເນັຍ, ມີໂຮງຮຽນທັງຫມົດຫລາຍກວ່າ **200** ແຫ່ງ ແລະມີພະນັກງານເຮັດວຽກເຕັມເວລາຫລາຍກວ່າ **14,500** ຕຳແຫນ່ງ (ເປັນຕົວແທນໃຫ້ພະນັກງານຫລາຍກວ່າ **15,800** ຄົນ. ສູນກາງສຶກສາແຊນດິເອໂກ ປັບປຸງຄວາມສຳເຣັດຂອງພວກນັກຮຽນໂດຍເນັ້ນຫນັກໃສ່ພື້ນຖານການສຶກສາວິຊາອ່ານ, ຂຽນ, ແລະ ເລກຈາກຫ້ອງຕຽມ – ອະນຸບານເຖິງປີທີ **12.** ສູນກາງສຶກສາໄດ້ຕັດສິນໃຈຊົດຊ່ອຍໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນຂອງພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ.

ພາລະຫນ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.